ກົມ... ການປະຊາຊົນ
ເລກ 31
ວັນທີ 14-6-99

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------===00===---------

ອົງການອະທິໄອຍະການ
ປະຊາຊົນ ແຫ່ງ ສປປລ

ເລກທີ 52 /ອອປ.

# ຄຳສັ່ງແນະນຳ

ເຖິງ: ໄອຍະການທະຫານຂັ້ນສູງ, ໄອຍະການປະຊາຊົນແຂວງ, ກຳແພງນະຄອນ, ເຂດພິເສດໄຊສົມບູນ.

ເລື່ອງ: ໃຫ້ຄົ້ນຄ້ວາຂື້ນບັນຊີລາຍຊື່ນັກໂທດ ຜູ້ທີ່ມີຄວາມຫ້າວຫັນໃນການດັດສ້າງ ແລະກໍ່ສ້າງ ເພື່ອສະເໜີຂໍອະໄພຍະໂທດ ( ປ່ອຍຕົວ, ຜ່ອນໂທດ ).

ອີງຕາມ ລັດຖະທຳມະນູນ ແຫ່ງ ສ ປ ປ ລາວ ໝວດທີ V ມາດຕາ 53 ຂໍ້ 9 ວ່າດ້ວຍການອະໄພຍະໂທດ.

ອີງຕາມ ຈົດໝາຍທາງການ ຂອງຫ້ອງວ່າການສະພາແຫ່ງຊາດ ສະບັບລົງວັນທີ 16/3/99 ໄດ້ແຈ້ງໃຫ້ຮູ້ເຖິງຜົນຂອງການຕົກລົງເຫັນດີ ຂອງຄະນະປະຈຳສະພາແຫ່ງຊາດ ໃຫ້ຈັດຕັ້ງປະຕິບັດອະໄພຍະໂທດ ໃຫ້ແກ່ນັກໂທດຜູ້ທີ່ມີຄວາມກ້າວໜ້າ ເນື່ອງໃນໂອກາດວັນລັດຖະທຳມະນູນຄົບຮອບ 8 ປີ.

ອີງຕາມ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແຫ່ງ ສ ປ ປ ລາວ.

ອີງຕາມ ການຕົກລົງເອກະພາບລະຫວ່າງ ອົງການອະທິໄອຍະການປະຊາຊົນ ກັບກະຊວງພາຍໃນ ແລະອົງການໄອຍະການທະຫານຂັ້ນສູງ ລົງວັນທີ 31/05/1999.

ອະທິໄອຍະການປະຊາຊົນ ແຫ່ງ ສປປ ລາວ ຈຶ່ງໄດ້ອອກຄຳສັ່ງແນະນຳດັ່ງນີ້:

1.) ໃຫ້ໄອຍະການປະຊາຊົນແຂວງ, ກຳແພງນະຄອນ, ເຂດພິເສດໄຊສົມບູນ ປະສານສົມທົບກັບກອງບັນຊາການ ປກສ, ສານປະຊາຊົນ, ຄະນະພັກຜູ້ຊີ້ນຳອົງການຍຸຕິທຳແຂວງ, ກຳແພງນະຄອນ, ເຂດພິເສດໄຊສົມບູນ ຮີບຮ້ອນຄົ້ນຄ້ວາເລືອກເຟັ້ນຂື້ນບັນຊີລາຍຊື່ນັກໂທດຜູ້ທີ່ກ້າວໜ້າເຂົ້າໃສ່ຮ່າງບັນຊີທີ່ຄັດຕິດມາພ້ອມນີ້ ແລ້ວສົ່ງໃຫ້ອົງການອະທິໄອຍະການປະຊາຊົນ ແຫ່ງ ສ ປ ປ ລາວ ຊ້າສຸດບໍ່ໃຫ້ກາຍວັນທີ 05/07/1999 ໂດຍປະຕິບັດຕາມແຜນການ ການຈັດຕັ້ງປະຕິບັດການອະໄພຍະໂທດ ໃຫ້ນັກໂທດໃນທົ່ວປະເທດ ເນື່ອງໃນໂອກາດວັນລັດຖະທຳມະນູນຄົບຮອບ 8 ປີ ສະບັບເລກທີ 51/ອອປ, ລົງວັນທີ 03/ ມິຖຸນາ / 1999.

- ການຄົ້ນຄ້ວາເລືອກເຟັ້ນຂື້ນບັນຊີລາຍຊື່ນັກໂທດຜູ້ທີ່ກ້າວໜ້າ ເພື່ອສະເໜີຂໍອະໄພຍະໂທດດັ່ງກ່າວມາຂ້າງເທິງນັ້ນ ເພື່ອປະຕິບັດຕາມແຈ້ງການ ຂອງຫ້ອງວ່າການສູນກາງພັກ ( ໃນຂໍ້ທີ 2 ) ສະບັບເລກທີ 251/ຫສພ, ລົງວັນທີ 27/5/1999 ການຂື້ນບັນຊີລາຍຊື່ນັກໂທດຜູ້ທີ່ກ້າວໜ້າດັ່ງກ່າວ ໃຫ້ຄົ້ນຄ້ວາເລືອກເຟັ້ນເອົານັກໂທດການເມືອງ ( ຜູ້ທີ່ບໍ່ແມ່ນຫົວໜ້າໃນການ ), ຖ້ານັກໂທດຜູ້ໃດຫາກປະຕິບັດໄດ້ຕາມມາດຕະຖານ ແລະເງື່ອນໄຂການອະໄພຍະໂທດແລ້ວ ກໍ່ຄວນເອົາລາຍຊື່ນັກໂທດດັ່ງກ່າວເຂົ້າບັນຊີ ເພື່ອນຳສະເໜີຂໍອະໄພຍະໂທດໃຫ້.

2. ສຳລັບອົງການໄອຍະການທະຫານ ໃຫ້ປະຕິບັດຄ້າຍຄືກັນ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນຂົງເຂດພົວພັນກັບວຽກງານຂອງຕົນ; ກໍລະນີຈຳເປັນຫຍຸ້ງຍາກອາດຈະພົວພັນປະສານສົມທົບກັບໄອຍະການປະຊາຊົນແຂວງ, ກຳແພງນະຄອນ, ເຂດພິເສດໄຊສົມບູນ ຈັດຕັ້ງປະຕິບັດຮ່ວມກັນກໍ່ໄດ້.

ດັ່ງນັ້ນ ຄະນະໄອຍະການປະຊາຊົນ ແຫ່ງ ສ ປ ປ ລາວ ຈຶ່ງໄດ້ອອກຄຳສັ່ງແນະນຳສະບັບນີ້ ເພື່ອໃຫ້ຮີບຮ້ອນຈັດຕັ້ງປະຕິບັດ ຕາມເນື້ອໃນດັ່ງກ່າວຢ່າງເຂັ້ມງວດ ແລະ ຮີບດ່ວນດ້ວຍ.

ວຽງຈັນ, ວັນທີ..04..JUN..1999

ຄະນະໄອຍະການປະຊາຊົນ.

ຄຳປານ ພິລາວົງ